ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ນຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222, 451116 ແຟັກ: 451117
PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222, 451116 FAX: 451117
E-mail:Lcc@laocement.com,www.laocement.com

ເລກທີ 1149/ບຊລ
ນະຄອນຫຼວງວຽງຈັນ, ວັນທີ 09 JUN 2023

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 1 ປີ 2023

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມວິສາມັນສະພາ ບໍລິຫານ ຄັ້ງທີ 01 ປີ 2023 ເຊິ່ງຈັດຂຶ້ນໃນວັນທີ 09 ມິຖຸນາ 2023 ເວລາ 8:30 ໂມງ, ຢູ່ສຳນັກງານບໍລິສັດ ຊີມັງ ລາວ ມະຫາຊົນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ພິຈາລະນາ ແລະ ຮັບຮອງ ບົດລາຍງານກ່ຽວກັບການແຕ່ງຕັ້ງຜູ້ບໍລິຫານຂັ້ນສູງ ຂອງບໍລິສັດ ຊີມັງລາວ ມະຫາຊົນ.
2. ພິຈາລະນາ ແລະ ຮັບຮອງ ບົດລາຍງານກ່ຽວກັບການຢຸດຕິການຍົກຍ້າຍໂຮງງານຊີມັງວັງວຽງ ຫຼັງ 2 ໄປຕັ້ງ ຢູ່ເຂດອຸດສາຫະກຳຊັບພະຍາກອນປຸງໃໝ່ ແຂວງຄຳມ່ວນ.
3. ພິຈາລະນາ ແລະ ຮັບຮອງ ບົດລາຍງານກ່ຽວກັບການແຕ່ງຕັ້ງຄະນະຮັບຜິດຊອບວຽກງານການສະສາງຊັບ ສິນຂອງບໍລິສັດທີ່ມີຢູ່ໃນໂຮງງານຊີມັງວັງວຽງຫຼັງ 2.
4. ພິຈາລະນາ ແລະ ຮັບຮອງ ບົດລາຍງານກ່ຽວກັບການສ້າງຕັ້ງບໍລິສັດ ພັດທະນາ ກໍ່ສ້າງ ຕ໊ອເມືອງລາວ ຈຳ ກັດຜູ້ດຽວ ແລະ ບໍລິສັດ ວັດສະດຸກໍ່ສ້າງ ປະເພດໃໝ່ລາວ ຈຳກັດຜູ້ດຽວ.
5. ພິຈາລະນາ ແລະ ຮັບຮອງ ບົດລາຍງານການສຶກສາຄວາມເປັນໄປໄດ້ໃນການກໍ່ສ້າງໂຄງການເຂດສາທິດ ເສດຖະກິດອຸດສາຫະກຳທ່ອງທ່ຽວວັດທະນະທຳວັງວຽງ ສປປ ລາວ.
6. ພິຈາລະນາ ແລະ ຮັບຮອງ ທົບທວນວຽກງານກອງປະຊຸມສະພາບໍລິຫານຄັ້ງຜ່ານມາ ແລະຄວາມຄືບໜ້າ.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານບໍລິສັດ

ເນ້ຍເຫຼ້ຍ